

# ທ່ານ ເຄີຍ ໄດ້ຍິນ ບໍ່ວ່າ?

**ອາດມີເງິນຫຼາຍເຖິງ $4,824 ຫຼືຫຼາຍກວ່ານັ້ນ — ລໍຖ້າທ່ານຢູ່!**

ຈົ່ງຍື່ນຟອມຂໍເງິນພາສີຄືນເພື່ອທວງເອົາຜົນປະໂຫຍດທີ່ທ່ານຄວນໄດ້

*ເຄຣດິດລາຍໄດ້ທີ່ໄດ້ຮັບຈາກວຽກງານ ແລະເຄຣດິດພາສີເດັກນ້ອຍ*

- ຖ້າວ່າ ທ່ານໄດ້ເຮັດວຽກໃນປີ 2008, ມີເດັກນ້ອຍອາໄສຢູ່ກັບທ່ານແລະມີລາຍໄດ້ຕໍ່າກວ່າ $39,000

ຫຼື

- ບໍ່ມີເດັກນ້ອຍອາໄສຢູ່ກັບທ່ານແລະມີລາຍໄດ້ໜ້ອຍກວ່າປະມານ $13,000

**ທ່ານອາດມີເງື່ອນໄຂດີ!** ທ່ານສາມາດຮັບເອົາການຊ່ວຍເຫຼືອດ້ານພາສີໄດ້**ຟຣີ.**
ລາຍລະອຽດເພີ່ມເຕີມ ຕິດຕໍ່ກົມສຳພາກອນໄດ້ທີ່ **1-800-829-1040.**

ສຳລັບຂໍ້ມູນເພີ່ມເຕີມ:

______________________________

______________________________

______________________________

______________________________

______________________________

______________________________

TAX CREDITS FOR
EIC
AND CHILD TAX CREDIT
PEOPLE WHO WORK

## ເຄຣດິດພາສີຈາກການເຮັດວຽກແລະເຄຣດິດພາສີສໍາລັບເດັກ: ທ່ານສາມາດເປັນໜີ້ພາສີໜ້ອຍລົງໄດ້ ແລະໄດ້ຮັບເງິນສົດຄືນຈາກກົມພາສີ (IRS)!

- ຖ້າວ່າ ທ່ານໄດ້ເຮັດວຽກໃນປີ 2008 — ວຽກເຕັມເວລາ ຫລືວຽກບໍ່ເຕັມເວລາ — ທ່ານອາດມີສິດເໝາະສົມໄດ້.
- ເຖິງແມ່ນວ່າ ທ່ານບໍ່ຄ້າງພາສີລາຍໄດ້ ທ່ານກໍ່ສາມາດໄດ້ເຄຣດິດ.

## ຖ້າວ່າ ທ່ານມີລູກໆອາໄສຢູ່ນໍາທ່ານກາຍເຄິ່ງປີ 2008 ຂຶ້ນໄປ:

- **ສໍາລັບ EIC** (ເຄຣດິດພາສີຈາກການເຮັດວຽກ), ລູກຕ້ອງມີອາຍຸຕໍ່າກວ່າ 19 ປີ ໃນປີ 2008 (ນັກຮຽນເຕັມເວລາອາດມີອາຍຸຕໍ່າກວ່າ 24 ປີ; ລູກທີ່ພິການເຕັມສ່ວນ ແລະຖາວອນອາດມີອາຍຸເທົ່າໃດກໍ່ໄດ້.)
- **ສໍາລັບ CTC** (ເຄຣດິດພາສີສໍາລັບເດັກ), ລູກຕ້ອງອາຍຸຕໍ່າກວ່າ 17 ປີ ໃນປີ 2008.

## ຖ້າວ່າ ທ່ານບໍ່ມີລູກອາໄສຢູ່ນໍາທ່ານ:

- ທ່ານສາມາດທວງເອົາ EIC ໄດ້ ຖ້າວ່າ ທ່ານອາຍຸລະຫວ່າງ 25 ຫາ 64 ປີ ໃນປີ 2008.

## ຂ້າພະເຈົ້າສາມາດມີລາຍໄດ້ຈາກວຽກເທົ່າໃດ? ຈໍານວນເຄຣດິດພາສີຫລາຍປານໃດທີ່ຂ້າພະເຈົ້າສາມາດໄດ້?

| ສໍາລັບ EIC, ຖ້າວ່າ ທ່ານມີ: | ລາຍໄດ້ຈາກວຽກໜ້ອຍກວ່າ: | ທວງຈາກ EIC ໄດ້ເຖິງ: |
|---|---|---|
| ລູກ 1 ຄົນ | $33,995 | $2,917 |
| ລູກ 2 ຄົນຂຶ້ນໄປ | $38,646 | $4,824 |
| ບໍ່ມີລູກ | $12,880 | $438 |
| **ສໍາລັບ CTC, ຖ້າວ່າ ທ່ານມີ:** | **ລາຍໄດ້ຫລາຍກວ່າ:** | **ທວງຈາກ CTC ໄດ້ເຖິງ:** |
| ລູກ 1 ຄົນຂຶ້ນໄປ | $8,500 | $1,000 ຕໍ່ເດັກໜຶ່ງຄົນ |

ຂີດຈໍາກັດລາຍໄດ້ EIC ທີ່ກໍານົດໄວ້ສໍາລັບຄົນງານທີ່ແຕ່ງງານແລ້ວ ແມ່ນ $3,000 ຂຶ້ນໄປ.

## ຈະເຮັດແນວໃດ ຖ້າວ່າ ຂ້າພະເຈົ້າບໍ່ແມ່ນພົນລະເມືອງສະຫະຣັຖອາເມລິກາ? ຄົນເຂົ້າເມືອງທີ່ເຮັດວຽກແລະມີເງື່ອນໄຂກົງກັບຂໍ້ກໍານົດອື່ນໆ ອາດມີສິດໄດ້ຮັບ.

- **ສໍາລັບ EIC**: ຄົນງານ, ຜົວຫລືເມັຽ ແລະລູກໆ ທີ່ຕ້ອງການທວງເອົາ ຈໍາເປັນຕ້ອງມີເລກປະກັນສັງຄົມ (ໂຊໂຊ).
- **ສໍາລັບ CTC**: ຕ້ອງໃຊ້ ເລກປະກັນສັງຄົມ ຫລືເລກປະຈໍາຕົວຜູ້ເສັຽພາສີ (ITIN).

## ຈົ່ງຍື່ນຟອມພາສີເງິນຄືນຂອງຣັຖບານກາງເພື່ອເອົາ EIC ແລະ CTC: ຂໍຄວາມຊ່ວຍເຫລືອຟຣີ!!!

- VITA — ອາສາສມັກຊ່ວຍເຫລືອດ້ານພາສີລາຍໄດ້ — ຊ່ວຍປະຊາຊົນໃນການປະກອບຟອມເສັຽພາສີຟຣີ.
- ກຸ່ມຊຸມຊົນທີ່ໄດ້ຮັບການຝຶກອົບເພື່ອເຮັດວຽກ VITA. ສໍາລັບສະຖານທີ່ໃກ້ບ້ານທ່ານ, ໂທຣ 1-800-829-1040.

## ຖ້າວ່າ ທ່ານເຮັດວຽກ, ທ່ານສາມາດໄດ້ເຄຣດິດພາສີເຫລົ່ານີ້ໄດ້ ແລະບໍ່ເສັຽຜົນປະໂຫຍດຊ່ວຍເຫລືອອື່ນໆ

ເງິນຈາກ EIC ແລະ CTC ຈະບໍ່ຖືວ່າເປັນລາຍໄດ້ ເມື່ອທ່ານຮ້ອງຂໍການຊ່ວຍເຫລືອ ຫລືຕໍ່ອາຍຸການຊ່ວຍເຫລືອໃໝ່ ເຊັ່ນວ່າ ບັດຊື້ອາຫານ, SSI, Medicaid, ການຊ່ວຍເຫລືອເງິນສົດ, ຫລືບ້ານພັກສາທາລະນະ. ໂຄງການຊ່ວຍເຫລືອສາທາລະນະບາງໂຄງການອາດມີກໍານົດເວລາຈໍາກັດວ່າ ທ່ານຈະສາມາດຮັກສາເງິນຄືນໄວ້ໃນບັນຊີທະນາຄານ ຂອງທ່ານດົນປານໃດ.

## ທ່ານອາດໄດ້ເຄຣດິດພາສີຄືນໃນເຊັກເງິນຂອງທ່ານບາງສ່ວນ

ຄົນງານບາງຄົນສາມາດຮັບເອົາເງິນຈ່າຍ EIC ລ່ວງໜ້າໃນເຊັກເງິນຂອງເຂົາເຈົ້າໄດ້ <u>ແລະ</u> ເຊັກຈາກ IRS ຫລັງຈາກເຂົາເຈົ້າຍື່ນຟອມເສັຽພາສີຂອງເຂົາເຈົ້າ. ໃຫ້ຂໍເອົາຟອມ W-5 ຂອງ IRS ຈາກນາຍຈ້າງຂອງທ່ານ ຫລືຈາກ IRS ທີ່ 1-800-829-3676 ຫລືທີ່ *www.irs.gov.*